# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 17 ມັງກອນ 2021 (01-17-2021)

## ຊົງສ້າງເພື່ອພຣະປະສົງນຶ່ງ

*ການພິສູດບຸຄລິກເປີດເຜີຍຕົວທ່ານຢ່າງໃດ?*

**ຈຸດສຳຄັນໃນບົດຮຽນ:** ພຣະເຈົ້າໃຫ້ຄຸນຄ່າເຮົາແຕ່ລະຄົນແລະຊົງສ້າງເຮົາເພື່ອຈຸດປະສົງນຶ່ງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:** ຄ້າຍກັບວ່າແຕ່ລະຄົນໃຜກໍສົນໃຈໃນການ ຄົ້ນຫາຂໍ້ມູນ-ຕົວເອງ. ການເປີດເຜີຍຕົວເອງເປັນທີ່ນິຍົມກັນຢ່າງເຫຼືອເຊື່ອ. ບໍ່ເປັນເຣື່ອງຜິດປົກກະຕິທີ່ເຮົາເຫັນບັນຊີຕົວເລກເພື່ອນໆສະມາຊິກຂອງເຂົາ... ສັດຂອງເຂົາ...ຫຼື ຈຳນວນຕົວເລກການຕັ້ງນາມຊື່ໃນບັນຊີຂ່າວສານມວນຊົນຂອງເຂົາ. ບາງຄົນໃຊ້ເພື່ອພຍາຍາມອະທິບາຍຫຼືພິສູດບົດບາດຂອງເຂົາ. ຖ້າໃຊ້ຖືກ, ຄຳພະຍານບາງເຣື່ອງກໍສາມາດຊ່ອຍຄົນໃຫ້ເຫັນຈຸດບອດຂອງເຂົາ ແລະຮຽນຮູ້ທີ່ຈະເຂົ້າໃຈແລະຢູ່ຮ່ວມກັບຄົນອື່ນທີ່ມີພອນສວັນພິເສດຫຼືອາຣົມຫຼາກຫຼາຍ.

ດ້ານພຣະຄັມພີບໍ່ໄດ້ໃຫ້ຂໍ້ມູນສ່ວນຕົວ; ດີກວ່ານັ້ນ, ຂໍ້ພຣະຄັມພີເຍີງໃຫ້ເຮົາຮູ້ວ່າພຣະເຈົ້າຮູ້ຈັກມະນຸດແຕ່ລະຄົນກ່ອນເຂົາເກີດມາ, ພຣະເຈົ້າປະກອບເຮົາໃນຄັນ, ແລະພວກເຮົາທຸກຄົນມີຈຸດປະສົງສະເພາະ. ເຢເຣມີຢາຜູ້ທຳນວາຍບໍ່ມີຂໍ້ມູນສ່ວນຕົວໃນສະຕະວັດທີທີກ່ອນ ຄ.ສ., ແຕ່ ຄຳຖາມປະຈຳຕົວດົນໃຈເພິ່ນໃຫ້ຮັບເອົາການຮຽກເອີ້ນພິເສດໃນຊີວິດຂອງເພິ່ນ. ພຣະຄຳຂອງພຣະເຈົ້າກ່າວຕໍ່ຜູ້ທຳນວາຍ<u>ເຈົ້ານໍ້າຕາ</u>ຜູ້ນີ້ ສາມາດຊ່ອຍເຮົາເຂົ້າໃຈວ່າເຮົາເປັນໃຜໃນຖານະລູກຂອງພຣະເຈົ້າ. ການຄົ້ນພົບຕົວເອງມາຈາກການຮູ້ຈັກຜູ້ຊົງສ້າງເຮົາແລະຜູ້ເອີ້ນເຮົາມາສູ່ພັນທະກິດນັ້ນ.

**ພຣະຄັມພີກ່າວວ່າແນວໃດ :** ( ເບິ່ງຕາມຂໍ້ 1, 2, ແລະ 3, )

### ການສຶກສາພຣະຄັມພີ

**1. <u>ເຢເຣມີຢາ 1:4-5</u>.**

*4 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຂ້າພຣະເຈົ້າວ່າ: 5 "ກ່ອນເຮົາໄດ້ເຮັດໃຫ້ເຈົ້າເປັນຕົວຕົນຢູ່ໃນທ້ອງແມ່ເຮົາໄດ້ເລືອກເຈົ້າໄວ້ແລ້ວກ່ອນເຈົ້າເກີດ ເຮົາໄດ້ແຕ່ງຕັ້ງເຈົ້າເປັນຜູ້ບໍຣິສຸດແລ້ວ ແລະເຮົາໄດ້ສະຖາປະນາໃຫ້ເປັນຜູ້ປະກາດພຣະທັມແກ່ບາງຊາດ."*

ເຢເຣມີຢາ ເປັນລູກຂອງປະໂຣຫິດສັດຊື່ໃນຍຸກສມັຍທີ່ວຸ້ນວາຍທີ່ສຸດໃນປວັດສາດຄົນຂອງພຣະເຈົ້າ. ອາສັຍຢູ່ອານາຈັກພາກໃຕ້ຂອງຢູດາຫຼັງຈາກຣາຊອານາຈັກຖືກແຍກເປັນສອງອານາຈັກ. ເຢເຣມີຢາປະເຊີນກັບຄວາມຫຍຸ້ງຍາກໃນຊີວິດປ່າວປະກາດຍາວນານຊຶ່ງມີໜ້ອຍຄົນໃນພວກເຮົາຍອມເຮັດຕາມໃນສິ່ງທີ່ພຣະເຈົ້າຢາກໃຫ້ເພິ່ນເວົ້າຄວາມຈິງທີ່ຫຍຸ້ງຍາກ ສູ່ຄົນທີ່ບໍ່ຢາກຟັງ.

ພຣະເຈົ້າຢາກໃຫ້ເຢເຣມີຢາເຂົ້າໃຈວ່າຊີວິດຂອງເພິ່ນ, ການຮຽກເອີ້ນ, ແລະເວລາທີ່ເພິ່ນເກີດ, ບໍ່ແມ່ນການບັງເອີນ. ບໍ່ມີຜູ້ໃດໃນພວກເຮົາຈະປະເຊີນກັບສິ່ງທີ່ເຢເຣມີຢາປະເຊີນມາ, ແຕ່ ພຣະເຈົ້າມັກເອີ້ນເຮົາສູ່ໜ້າທີ່ຍາກສເມີ. ພວກເຮົາຕ້ອງຮູ້ວ່ານີ້ບໍ່ແມ່ນເຄາະກັມງ່າຍໆຫຼືກິຈກັມບັງເອີນ. ພຣະເຈົ້າປະສົງໃຊ້ເຮົາໃນເວລາແລະສະຖານທີ່ແຫ່ງໃດແຫ່ງນຶ່ງ ແມ່ນສ່ວນນຶ່ງຂອງພຣະປະສົງສະເພາະຂອງພຣະອົງແລະແຜນການຂອງພຣະອົງຕັ້ງແຕ່ຕົ້ນເດີມ.

ຈົ່ງສັງເກດ ພຣະເຈົ້າໄດ້ເນັ້ນເຢເຣມີຢາ: "ກ່ອນເຮົາປະກອບເຈົ້າເປັນຕົວຕົນໃນທ້ອງແມ່ເຮົາໄດ້ເລືອກເຈົ້າໄວ້ແລ້ວກ່ອນເຈົ້າເກີດ." ພວກເຮົາຮຽນຮູ້ຄວາມຈິງອັນຍິ່ງໃຫຍ່ກ່ຽວກັບວ່າ ພຣະເຈົ້າແມ່ນໃຜແລະເຮົາແມ່ນໃຜ.

ທ່ານຈະຕອບສນອງຕໍ່ຄວາມຈິງທີ່ພຣະເຈົ້າຮູ້ຈັກທ່ານສ່ວນບຸກຄົນຢ່າງໃດ?

1. **ພຣະເຈົ້າປະກົດນອກເວລາ.** ພຣະອົງບໍ່ມີຕົ້ນ. ພຣະອົງບໍ່ໄດ້ຖືກສ້າງ. ພຣະອົງໃຫຍ່ກວ່າພວກເຮົາຢ່າງບໍ່ມີຂອບເຂດ. ກ່ອນພວກເຮົາເກີດມາ, ພຣະອົງຮູ້ຈັກເຮົາແລະຮູ້ວ່າພວກເຮົາຈະເປັນໃຜ. ພຣະອົງເປັນຜູ້ສ້າງເຮົາເໝືອນກັນ. ບໍ່ມີໃຜ "ສ້າງຕົນເອງ" ຂຶ້ນມາ, ມີແຕ່ຄົນຖືກສ້າງຂຶ້ນມາໂດຍຜູ້ອອກແບບທີ່ຮັກ.
2. **ການໃຫ້ກຽດດ້ວຍປາກ.** ທຸກວັນນີ້ ສັງຄົມຂອງເຮົາໄດ້ເຄື່ອນນິຍາມທີ່ມີຄວາມໝາຍຂອງຄຳວ່າ ເປັນມະນຸດ. ຄົນໄດ້ຖືກຖຽງກໍຣະນີເບື້ອງຕົ້ນຂອງແຕ່ລະບຸກຄົນແລະຄວາມສັກສິດຂອງຊີວິດມະນຸດເທິງເວທີສັງຄົມ, ໃນຂ່າວສານມວນຊົນ, ແລະໃນຫ້ອງຮຽນ. ແຕ່ພຣະເຈົ້າໄດ້ຖແລງຢ່າງແຈ່ມແຈ້ງໃນພຣະທັມຂອງພຣະອົງວ່າຊີວິດມະນຸດເລີ່ມຕົ້ນແຕ່ເລີ່ມຄິດ-ແລະພຣະອົງໃຫ້ຄຸນຄ່າຊີວິດນັ້ນ. ຊີວິດມີຄ່າສຳລັບພຣະເຈົ້າສເມີ ນັບຕັ້ງແຕ່ເລີ່ມແລກຂອງການປະຕິສົນທິ. ແມ້ກະທັ້ງເວລາຊີວິດຍັງບອບບາງແລະອາສັຍຄົນອື່ນ, ມະນຸດເປັນທີ່ຮູ້ຈັກແລະມີຄ່າຕໍ່ພຣະເຈົ້າ.

ຈົ່ງສະດັບຟັງທາງທີ່ພຣະເຈົ້າແຕ່ງຕັ້ງ ແລະໃຫ້ຄຸນຄ່າເຢເຣມີຢາທີ່ຍັງບໍ່ທັນເກີດໃນຂໍ້5: ເຮົາໄດ້ເລືອກເຈົ້າ. ເຮົາໄດ້ປະກອບເຈົ້າເປັນຕົວຕົນ. ເຮົາໄດ້ແຕ່ງຕັ້ງເຈົ້າ. ເຮົາໄດ້ສະຖາປະນາເຈົ້າໃຫ້ເປັນຜູ້ບໍຣິສຸດແລ້ວ ກ່ອນເຈົ້າເກີດ. ເຮົາໄດ້ສະຖາປະນາເຈົ້າໃຫ້ເປັນຜູ້ປະກາດພຣະທັມແກ່ນາໆຊາດ.

ພຣະເຈົ້າໄດ້ໃຊ້ຄຳແທນນາມຂອງບຸກຄົນ ເພື່ອບັນລະຍາຍເຢເຣມີຢາກ່ອນເພິ່ນເກີດບອກໃຫ້ພວກເຮົາຮູ້ວ່າເຢເຣມີຢາ ບໍ່ຈຳເປັນຕ້ອງຫາຍໃຈບາດທຳອິດກ່ອນເພິ່ນກາຍມາເປັນຄົນ. ເພິ່ນເປັນຄົນແລະມີຊີວິດຕັ້ງແຕ່ແລກເກີດແລ້ວ. ແມ້ກະທັ້ງກ້າວແລກຂອງຊີວິດ, ເຢເຣມີຢາເປັນມະນຸດເຕັມໂຕ, ຜູ້ຊຶ່ງມີຮູບຮ່າງຄ້າຍພຣະເຈົ້າອີງຕາມ ປຖກ 1:26-27. ແລະ ພຣະຄຳທີ່ພຣະເຈົ້າໃຊ້ໃນທີ່ນີ້ເພື່ອອະທິບາຍວ່າ ພຣະອົງໄດ້ "ປະກອບ"ເຢເຣມີຢາຢູ່ໃນທ້ອງແມ່ແມ່ນພາສາດຽວກັນກັບພາສາທີ່ພຣະອົງໃຊ້ອະທິບາຍພາຣະກິດການຊົງສ້າງຂອງພຣະເຈົ້າໃນການ "ປັ້ນມະນຸດຈາກດິນ" (ປຖກ 2:7).

ທ່ານດາວິດໄດ້ໃຊ້ພາສາດຽວກັນກ່ຽວກັບການເກີດຂອງເພິ່ນ: [13] "ພຣະອົງໄດ້ສ້າງທຸກສ່ວນໃນຕົວຂອງຂ້ານ້ອຍ ແລະ ຊົງປະກອບຂ້ານ້ອຍເປັນຮ່າງຄົນໃນເວລາຍັງຢູ່ໃນທ້ອງແມ່ ... ເວລາຂ້ານ້ອຍຢູ່ໃນທ້ອງແມ່ແລະຈະເຣີນເຕີບໂຕຂຶ້ນຢ່າງເລິກລັບ ພຣະອົງເຫັນກະດູກຂ້ານ້ອຍປະກອບເຂົ້າກັນ" (ພສສ 139:13,15).

ພຣະເຈົ້າທຳງານແບບດຽວກັນໃນທຸກວັນນີ້. ພຣະຜູ້ສ້າງໄດ້ປະກອບມະນຸດທຸກຄົນຢ່າງແມ່ນຢຳ. ມະນຸດທຸກຄົນມີຄ່າເຕັມປ່ຽມນັບຕັ້ງແຕ່ກ້າວແລກຂອງຊີວິດ. ຄວາມຈິງນີ້ມີຄວາມໝາຍແອບແຝງຢ່າງກ້ວາງຂວາງເພື່ອເຮົາຈະມອງເຫັນຕົວເອງແລະມອງເຫັນໂລກຢ່າງໃດ. ປະການທີນຶ່ງ ມັນເຕືອນເຮົາວ່າພວກເຮົາບໍ່ໄດ້ເກີດມາເອງ, ແຕ່ພວກເຮົາຖືກສ້າງຂຶ້ນມາໂດຍພຣະຜູ້ສ້າງຜູ້ຊົງເປັນຄວາມຮັກ. ປະການທີສອງມັນບອກໃຫ້ຮູ້ແນວທາງທີ່ເຮົາມອງເຫັນຄົນອື່ນ.

## 2. <u>ເຢເຣມີຢາ 1:6-8.</u>

*[6]ແລ້ວຂ້າພຣະເຈົ້າໄດ້ທູນຕອບວ່າ "ຂ້າແດ່ພຣະຜູ້ເປັນເຈົ້າ ຂ້ານ້ອຍບໍ່ຮູ້ວ່າຈະເວົ້າຢ່າງໃດ ເພາະວ່າຂ້ານ້ອຍຍັງນ້ອຍ." [7]ແຕ່ພຣະຜູ້ເປັນເຈົ້າຊົງບອກຂ້າພຣະເຈົ້າວ່າ: "ຢ່າເວົ້າວ່າເຈົ້າຍັງນ້ອຍ ເພາະວ່າເຮົາຈະໃຊ້ເຈົ້າໄປຫາປະຊາຊົນ ແລ້ວຈົ່ງບອກທຸກສິ່ງທີ່ເຮົາຈະສັ່ງເຈົ້າແກ່ພວກເຂົາ [8]ເຈົ້າຢ່າສູ່ຢ້ານຄົນເຫຼົ່ານັ້ນ ເພາະວ່າເຮົາຈະຢູ່ປົກປັກຮັກສາເຈົ້າ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫຼະ."*

ພວກເຮົາມີພຣະເຈົ້າຜູ້ປະກອບເຮົາແລະຮູ້ຈັກເຮົາກ່ອນເຮົາເກີດ, ແຕ່ພຣະອົງບໍ່ໄດ້ປະເຮົາຢູ່ບ່ອນນັ້ນ. ພຣະອົງໄດ້ເລືອກເຢເຣມີຢາແລະແຕ່ງຕັ້ງເພິ່ນເພື່ອຈຸດປະສົງນຶ່ງ. ແຕ່ສຳລັບຜູ້ປະກາດພຣະທັມໜຸ່ມ, ການຮຽກເອີ້ນຂອງ

ພຣະເຈົ້າປາກົດວ່າຍາກໂພດ. ການສງວນໂມເຊໄວ້ສະທ້ອນໃຫ້ເຫັນວ່າແມ່ນເພື່ອການຮັບໃຊ້ (ອົພຍົບ 4:10). ເຢເຣມີຢາຕອບວ່າເພິ່ນອາດບໍ່ແມ່ນຜູ້ເໝາະສົມກັບວຽກນີ້ເພາະວ່າເພິ່ນບໍ່ເປັນຄົນມີໄວຫານດີແລະຍັງນ້ອຍໂພດ.

ມີຂໍ້ແກ້ຕົວຫຍັງແດ່ເຮົາໃຊ້ເປັນຂໍ້ອ້າງເພື່ອບໍ່ຢາກເຮັດຕາມນ້ຳພຣະທັຍພຣະເຈົ້າໃນຊີວິດເຮົາ?

- **ຄຳແກ້ຕົວອີງຄວາມຂາດຕົກບົກພ່ອງ.** ອ້າງຄວາມເຍົາວັຍຂອງເພິ່ນ, ເຢເຣມີຢາຊາບເຖິງຄວາມບົກພ່ອງ ຂອງເພິ່ນ. ເຢເຣມີຢາບໍ່ໄດ້ເຂົ້າໃກ້ພຣະເຈົ້າຍ້ອນຄວາມອວດດີຂອງວັຍໜຸ່ມ. ເພິ່ນບໍ່ໄດ້ບອດຕໍ່ຄວາມອ່ອນແອ. ເປັນການດີທີ່ພວກເຮົາມອບຄວາມຈຳກັດຂອງເຮົາເພາະວ່າພຣະເຈົ້າສາມາດໃຊ້ບຸກຄົນທີ່ຖ່ອມຕົວລົງໃນທາງນີ້. ພຣະເຈົ້າທຳງານຜ່ານຜູ້ທີ່ຮູ້ວ່າຕົນບໍ່ມີພອນສວັນ ແລະຂອງປະທານພຽງພໍໂດຍປາສຈາກພຣະເຈົ້າ. ດັ່ງທີ່ທ່ານໂປໂລໄດ້ກ່າວຕໍ່ມາ, ພຣະເຈົ້າໄດ້ເອີ້ນເອົາຄົນທີ່ບໍ່ມີປັນຍາ, ບໍ່ມີອຳນາດ, ບໍ່ມີຖານະສູງ (1 ກຣທ 1:26).
- **ຄຳແກ້ຕົວດ້ານອາຍຸແລະຂາດປະສົບການ.** ການປະຕິເສດການຮຽກເອີ້ນຂອງພຣະເຈົ້າຂອງເຢເຣມີຢາປະການທີສອງແມ່ນເຣື່ອງອາຍຸແລະການຂາດປະສົບການ. ແຈ່ມແຈ້ງແລ້ວວ່າ, ເປັນການສລາດທີ່ຈະເອົາລູກຫຼື "ຜູ້ເຊື່ອໃໝ່ (1 ຕມທ 3:6)ໃສ່ບ່ອນມີສິດ, ແລະແລ້ວພຣະເຈົ້າປະຕິເສດບໍ່ໃຫ້ເຢເຣມີຢາໃຊ້ອາຍຸຂອງເພິ່ນເປັນຂໍ້ແກ້ຕົວທີ່ຈະເຮັດວຽກປະກາດທີ່ໄດ້ມອບໝາຍໃຫ້. ພາສາເຮັບເຣີ ສຳລັບຄຳວ່າໜຸ່ມອາດຖືກນຳໃຊ້ກວ້າງໆ, ແຕ່ການນຳໃຊ້ສ່ວນໃຫຍ່ໝາຍເຖິງຊາຍໜຸ່ມ(ກົງກັນຂ້າມກັບຊາຍແກ່ຫຼືຜູ້ອາວຸໂສ). ມີນັກສຶກສາຫຼາຍຄົນເຊື່ອວ່າເຢເຣມີຢາແມ່ນວັຍຄະນອງບໍ່ທັນຮອດຊາວປີໃນຊ້ຳ. ຜູ້ປ່າວປະກາດທີ່ຍັງໜຸ່ມນ້ອຍຫຼາຍຈະຂັບເຂື່ອນປະເທດຊາດໄປໄດ້ຢ່າງໃດ? ພຽງແຕ່ພຣະເຈົ້າກ່າວວ່າ, "ເຮົາຈະຢູ່ນຳເຈົ້າ" ກໍພໍແລ້ວ.

ພຣະເຈົ້າສັນຍາວ່າຈະສະຖິດຢູ່ນຳຜູ້ເຊື່ອທຸກຄົນ, ໂດຍບໍ່ຈຳກັດອາຍຸຫຼືຣະດູການໃນຊີວິດ. ດັ່ງເຢເຣມີຢາບໍ່ໄດ້ປ່ອຍໃຫ້ອາຍຸຂອງລາວຈ່ອງດຶງລາວຈາກການມອບຖວາຍຕົວແດ່ພຣະຜູ້ສ້າງ, ສະນັ້ນ ພວກວັຍກາງຄົນບໍ່ຄວນລໍຖ້າໃຫ້ເຖົ້າກວ່ານີ້ ຈຶ່ງມອບຖວາຍຕົວແດ່ພຣະເຢຊູ. ການຮັບໃຊ້ພຣະເຈົ້າບໍ່ໄດ້ຈຳກັດອາຍຸ. ວິທີທາງສ້າງສາວົກແມ່ນການຟັງສຽງຂອງພຣະເຈົ້າແລະກ້າວເຂົ້າສູ່ພັນທະກິດຂອງພຣະອົງ,ໂດຍບໍ່ກ່ຽວກັບອາຍຸ ຫຼືປະສົບການ. ອາຍຸບໍ່ເປັນບັນຫາ, ສຳລັບພຣະເຈົ້າຜູ້ທີ່ຮູ້ເຮົາແລະປະກອບເຮົາຈະຢູ່ກັບເຮົາ. ພຣະອົງຈະຢູ່ນຳເມື່ອເຮົາດຳເນີນຊີວິດຕາມພຣະປະສົງສຳລັບຊີວິດເຮົາ.

## 3. <u>ເຢເຣມີຢາ 1:9-10</u>.

*9ຄັນແລ້ວ ພຣະຜູ້ເປັນເຈົ້າໄດ້ຊົງເດ່ພຣະຫັດມາໃສ່ປາກຂ້າພຣະເຈົ້າ ແລະຊົງກ່າວຕໍ່ຂ້າພຣະເຈົ້າວ່າ: "ເບິ່ງດູເຮົາໄດ້ເອົາຄຳເວົ້າຂອງເຮົາໃສ່ໃນປາກຂອງເຈົ້າແລ້ວ 10ມື້ນີ້ ເຮົາໃຫ້ເຈົ້າມີອຳນາດເໜືອປະຊາຊາດແລະຣາຊອານາຈັກທັງຫຼາຍ ເພື່ອຖອນຮາກແລະຮື້ຖິ້ມເສັຽ ເພື່ອທຳລາຍແລະເຮັດໃຫ້ລົ້ມລົງ ເພື່ອກໍ່ຂຶ້ນແລະປູກຝັງໄວ້."*

ພຣະເຈົ້າໄດ້ບອກເຢເຣມີຢາ, "ເບິ່ງດູ ເຮົາໄດ້ເອົາຄຳເວົ້າຂອງເຮົາໃສ່ປາກຂອງເຈົ້າແລ້ວ." ການຮຽກເອີ້ນຂອງພຣະເຈົ້າບໍ່ເປັນການງ່າຍກ່ຽວກັບ "ການຄົ້ນພົບຕົວເອງ" ຂອງຜູ້ປະກາດພຣະທັມໜຸ່ມ. ເຢເຣມີຢາໄດ້ຮັບພັນທະກິດຂອງພຣະເຈົ້າແຈ່ມແຈ້ງໃຫ້ເທສນາການພິພາກສາແລະຄວາມພົ້ນຂອງປະຊາກອນພຣະເຈົ້າ. ຈົ່ງສັງເກດສອງສິ່ງທີ່ພຣະເຈົ້າເວົ້າໃນການຮຽກເອີ້ນຂອງພຣະອົງຕໍ່ເຢເຣມີຢາ:

- **ເຮົາໄດ້ເອົາໃສ່.** ການເອົາໃສ່ແມ່ນການເພີ່ມຣິດອຳນາດໂດຍພຣະເຈົ້າ. ສຳລັບເຢເຣມີຢາ, ພຣະເຈົ້າໄດ້ເອົາຄຳເວົ້າຂອງພຣະອົງໂດຍສະເພາະໃສ່ປາກຂອງລາວ. ຍ້ອນວ່າພຣະເຈົ້າໄດ້ເອົາຄຳເວົ້າຂອງພຣະອົງໃສ່ປາກຂອງລາວ, ຖ້າຄົນຂອງພຣະເຈົ້າບໍ່ຍອມຮັບເຢເຣມີຢາ, ກໍໝາຍຄວາມວ່າເຂົາບໍ່ຍອມຮັບພຣະເຈົ້າ.
- **ເຮົາໄດ້ແຕ່ງຕັ້ງເຈົ້າ.** ການຖືກແຕ່ງຕັ້ງແມ່ນການຖືກເລືອກ. ຄົນທົ່ວໂລກໃນເວລານັ້ນ, ມີແຕ່ເຢເຣມີຢາ-"ຜູ້ດຽວ"

ເປັນຜູ້ສມັກຮັບໃຊ້ພາຣະກິດອັນຫຍຸ້ງຍາກຂອງພຣະເຈົ້ານີ້. ລາວເປັນຜູ້ຖືກເລືອກດ້ວຍພຣະຫັດພຣະເຈົ້າເອງ. ພວກເຮົາສາມາດຍອມຮັບການເລົ້າໂລມໄດ້ແລ້ວວ່າ ພຣະເຈົ້າອົງດຽວກັນນີ້ ເປັນຜູ້ສວມຍຸທພັນຜູ້ທຳນວາຍໜຸ່ມລຶກລັບຜູ້ນີ້ໃຫ້ປະກາດຄວາມຈິງອັນຫຍຸ້ງຍາກແກ່ຄົນຢູດາ ແມ່ນພຣະເຈົ້າອົງດຽວເປັນຜູ້ປະທານຣິດອຳນາດຂອງພຣະອົງເພື່ອເຮັດສິ່ງທີ່ພຣະອົງຮຽກເອີ້ນໃຫ້ເຮົາເຮັດໃນທຸກວັນນີ້. ພຣະວິນຍານບໍຣິສຸດແມ່ນຜູ້ເລົ້າໂລມຂອງເຮົາ, ໄດ້ປະທານຣິດອຳນາດໃຫ້ໃຊ້ຊີວິດຢ່າງອາດຫານໃນການປະກາດພຣະເຈົ້າໃນໂລກ, ໃຫ້ຣິດອຳນາດດຳເນີນຊີວິດໃນການຮຽກເອີ້ນເຮົາໂດຍສະເພາະແລະເຜີຍແຜ່ຂ່າວປະເສີດແຫ່ງຄວາມພົ້ນໂດຍທາງຄວາມເຊື່ອໃນພຣະເຢຊູຄຣິດຈົນເຖິງທີ່ສຸດປາຍແຜ່ນດິນໂລກ.

| ຍາມໃດໂດຍສະເພາະເວລາທ່ານຮູ້ຕົວວ່າທ່ານມີຄ່າຕໍ່ພຣະເຈົ້າ? |
|---|

ພວກເຮົາມີພັນທະສັນຍາວ່າພຣະເຈົ້າໄດ້ປະກອບເຮົາໃນຮູບຮ່າງຂອງພຣະອົງ, ຊຶ່ງພຣະອົງຮູ້ຈັກເຮົາກ່ອນເຮົາເກີດ, ວ່າພຣະອົງໃຫ້ຣິດອຳນາດເຮົາໃນຄວາມອ່ອນແອຂອງເຮົາ, ແລະພຣະອົງຊົງເປັນເໝືອນເດີມດັ່ງດຽວກັບພຣະອົງເປັນໃນສມັຍຂອງເຢເຣມີຢາ. ພວກເຮົາກໍເຫສນາພຣະຄຣິດເໝືອນກັນ. ພຣະເຈົ້າໄດ້ເອົາຄຳເວົ້າຂອງພຣະອົງໃສ່ປາກເຮົາ ຄືກັນກັບພຣະອົງເອົາຄຳເວົ້າຂອງພຣະອົງໃສ່ປາກເຢເຣມີຢາ.

ບາງທີທ່ານຮູ້ສຶກບໍ່ລົ້ງກັບສະຖານທີ່ຫຼືສິ່ງປະກອບບໍ່ດີ. ບາງທີທ່ານອາດແປກໃຈວ່າ ພຣະເຈົ້າສາມາດໃຊ້ທ່ານໄດ້ຢ່າງໃດໃນເກີນອາຍຸຂອງທ່ານແລະຄວາມຈຳກັດທາງດ້ານຮ່າງກາຍຂອງທ່ານ. ຈົ່ງຮູ້ວ່າຖ້າທ່ານໃນພຣະຄຣິດ, ພຣະເຈົ້າຮູ້ຊື່ທ່ານ. ພຣະອົງຮູ້ຈັກທ່ານກ່ອນທ່ານເກີດ. ຈົ່ງຮູ້ວ່າຄວາມອ່ອນແອແລະຄວາມຈຳກັດຂອງທ່ານເປັນຄູ່ທຽບຄຽງເໝາະສົມກັບຣິດອຳນາດຂອງພຣະອົງ.

| ກຸ່ມຂອງພວກເຮົາຊ່ອຍທ່ານໃຫ້ເຂົ້າໃຈພຣະປະສົງຂອງພຣະເຈົ້າໃນຊີວິດທ່ານຢ່າງໃດ? |
|---|

## ນຳໃຊ້ໃນຊີວິດ

ໂດຍບໍ່ຄຳນຶງເຖິງຄວາມອ່ອນແອຫຼືຄວາມຈຳກັດໃດໆ, ທ່ານມີຄ່າຕໍ່ພຣະເຈົ້າແລະຖືກສ້າງຂຶ້ນມາເພື່ອຈຸດປະສົງນີ້ງ. ທ່ານຈະມີຊີວິດຢູ່ເພື່ອພຣະປະສົງນັ້ນຢ່າງໃດ? ຈົ່ງເລືອກການນຳໃຊ້ຂໍ້ໃດຂໍ້ນຶ່ງຕໍ່ລົງໄປນີ້:

- **ສແວງຫາ.** ອະທິຖານແລະສແວງຫາພຣະພັກພຣະເຈົ້າ. ຂໍໃຫ້ພຣະອົງສະແດງທາງທີ່ພຣະອົງສາມາດໃຊ້ທ່ານເພື່ອອານາຈັກຂອງພຣະອົງ.
- **ມອບຕົວ.** ຈົ່ງເອົາຄຳວ່າ "ໂດຍຂ້ານ້ອຍ" ຕັ້ງໄວ້ເທິງໂຕະ ແລະວາງໃຈວ່າພຣະເຈົ້າຈະປະທານຣິດອຳນາດໃຫ້ທ່ານເພື່ອການຮັບໃຊ້ພຣະອົງ. ຈົ່ງກ້າວອອກໄປດ້ວຍການເຊື່ອຟັງ, ແລະໄວ້ວາງໃຈໃນຣິດອຳນາດຂອງພຣະວິນຍານບໍຣິສຸດ, ແລະຮັບເອົາການຮຽກເອີ້ນຂອງພຣະເຈົ້າໃນຊີວິດທ່ານ.
- **ຈົ່ງອູ້ມຊູ.** ຈົ່ງອູ້ມຊູແລະໜູນໃຈຜູ້ທີ່ຖືກລືມແລະຖືກຄົນອື່ນມອງຂ້າມ. ຈົ່ງຫາທາງລົງມືຊ່ອຍຄົນເຫຼົ່ານັ້ນທີ່ບໍ່ມີ ວີ່ແວວວ່າວັທນາທັມຈະຊ່ອຍຫຽັງໄດ້. ເຫດທີ່ຊ່ອຍ ເພາະວ່າພຣະເຈົ້າຖືວ່າເຂົາມີຄ່າແລະມີພຣະປະສົງສຳລັບເຂົາ.

ພວກເຮົາມີສິ່ງສຳຄັນເໜືອກວ່າການພິສູດສ່ວນຕົວ. ພວກເຮົາມີຕາປະທັບສະເພາະຂອງພຣະເຈົ້າເທິງຊີວິດເຮົາເມື່ອເຮົາເຂົ້າໃຈວ່າເຮົາແມ່ນໃຜແລະພົບຈຸດປະສົງໃນພຣະອົງ, ພວກເຮົາກໍຈະພົບກັບຊີວິດຢ່າງເຫຼືອເຊື່ອທີ່ພຣະເຈົ້າອອກແບບໄວ້ສຳລັບເຮົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**